ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ໂຄງການຍ່ອຍ ທີ່ໄດ້ຮັບທຶນພາຍໃນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ປະຈຳປີ 2023 ແລະ ແຜນປະຈຳປີ 2024

ນະຄອນຫຼວງວຽງຈັນ, ກຸມພາ 2024

ຄຳນຳ

ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ສຸມໃສ່ ຈັດຕັ້ງປະຕິບັດແຜນການ ປີ 2023 ແນໃສ່ເຮັດໃຫ້ບັນດາຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມທີ່ກຳນົດໄວ້ ໄດ້ຮັບຜົນສຳເລັດຕາມເປົ້າໝາຍ ປະກອບສ່ວນໃຫ້ແກ່ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄປຕາມທິດສີຂຽວ ແລະ ຍືນຍົງ. ບົດສະຫລຸບນີ້ ໄດ້ສັງລວມຜົນການຈັດຕັ້ງປະຕິບັດແຜນການສະໜອງທຶນ ປະຈຳປີ 2023 ພ້ອມທັງຕີລາຄາ ການຈັດຕັ້ງປະຕິບັດໂຄງການ ແລະ ບົດຮຽນທີ່ຖອດຖອນໄດ້ໃນໜຶ່ງປີຜ່ານມາ ແລະ ກຳນົດແຜນການສະໜອງທຶນ ປະຈຳ ປີ 2024 ໃຫ້ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ໃນການສະໜອງທຶນ ໃຫ້ແກ່ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

ໃນປີ 2023 ສາມາດສະໜອງທຶນໃຫ້ແກ່ໂຄງການທີ່ຈັດຕັ້ງປະຕິບັດ ແລະ ລາຍຈ່າຍຄ່າບໍລິຫານ ລວມທັງໝົດ ຈຳນວນ 8.6 ຕື້ກີບ ເທົ່າກັບ 94% ທຽບໃສ່ແຜນປີ 9.1 ຕື້ກີບ.

ໃນປີ 2023 ໄດ້ມີກອງປະຊຸມເຜີຍແຜ່ຜ່ານລະບົບອອນລາຍ ຈຳນວນ 2 ຄັ້ງ ກ່ຽວກັບ ນະໂຍບາຍສະໜອງທຶນພາຍໃນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ທີ່ຈັດແບ່ງການໃຫ້ທຶນເປັນ 2 ຂະໜາດ ຄື ໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ເຫັນໄດ້ວ່າມີຫຼາຍພາກສ່ວນເຂົ້າຮ່ວມ ໂດຍສະເພາະພາກສ່ວນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ, ພ້ອມທັງ ອົງການຈັດຕັ້ງມະຫາຊົນ ໃນຂອບເຂດທົ່ວປະເທດ;

ບົດສະຫລຸບນີ້ ໄດ້ສັງລວມຜົນການຈັດຕັ້ງປະຕິບັດແຜນການ ປີ 2023 ພ້ອມທັງຕີລາຄາ ດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນໜຶ່ງປີ ຜ່ານມາ ແລະ ກຳນົດທິດທາງແຜນການ ປີ 2024 ໃຫ້ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ໃຫ້ປະກົດຜົນເປັນຈິງ ຕາມພາລະບົດບາດ ໃນການລະດົມທຶນ, ການສະສົມທຶນ ແລະ ການສະໜອງທຶນ ໃຫ້ແກ່ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

ນະຄອນຫຼວງວຽງຈັນ, ວັນທີ 20 ກຸມພາ 2024

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ນ. ບົວຄຳ ສຸລິວັນ

ສາລະບານ

I. ສະພາບລວມ

II. ສະຫຼຸບການຈັດຕັ້ງປະຕິບັດໂຄງການ ປະຈຳປີ 2023

1. ການສະໜອງທຶນແຕ່ລະຮ່ອງທຶນ

2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຕາມແຕ່ລະຮ່ອງທຶນ

2.1. ຮ່ອງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ

2.2. ຮ່ອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ

2.3. ຮ່ອງທຶນດ້ານສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ

2.4. ຮ່ອງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ

2.5. ຮ່ອງທຶນການຄຸ້ມຄອງທີ່ດິນແບບຍືນຍົງ

2.6. ຮ່ອງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ

3. ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການເງິນກູ້

III. ການຕິດຕາມ ແລະ ປະເມີນຜົນໂຄງການຍ່ອຍ

3.1. ຕີລາຄາການຈັດຕັ້ງປະຕິບັດ

3.2. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້

IV. ແຜນການຈັດຕັ້ງປະຕິບັດ ປະຈຳປີ 2024

I. ສະພາບລວມ

ໃນປີ 2023 ທຶນພາຍໃນ ແມ່ນໄດ້ມີຄາດໝາຍໃນການສະໜອງທຶນໃຫ້ກັບໂຄງການຍ່ອຍ ແລະ ຄ່າບໍລິຫານ ລວມທັງໝົດ 9.1 ຕື້ກີບ, ຊຶ່ງສາມາດຈັດຕັ້ງປະຕິບັດຕົວຈິງໄດ້ 8.6 ຕື້ກີບ ທຽບເປັນເປີເຊັນໄດ້ 94 %. ສາມາດສະໜອງ ງົບປະມານໃຫ້ໄດ້ທັງໝົດ 6 ຮ່ອງທຶນ: ຮ່ອງທຶນນະໂຍບາຍ ປະຕິບັດໄດ້ 95%, ຮ່ອງທຶນຊີວະນາໆພັນ ປະຕິບັດໄດ້ 99%, ຮ່ອງທຶນສິ່ງແວດລ້ອມ ປະຕິບັດໄດ້ 99%, ຮ່ອງທຶນການຄຸ້ມຄອງຊັບພະຍາກອນນ້ຳ ປະຕິບັດໄດ້ 80%, ຮ່ອງທຶນ ຄຸ້ມຄອງທີ່ດິນ ປະຕິບັດໄດ້ 87 %, ຮ່ອງທຶນຄຸ້ມຄອງການປ່ຽນແປງດິນຟ້າອາກາດ ປະຕິບັດໄດ້ 78%.

ໃນປີ 2023 ທຶນພາຍໃນ ກໍ່ໄດ້ມີຜົນສຳເລັດຫຼາຍດ້ານຄື: ສຳເລັດກອງປະຊຸມກອງປະຊຸມເຜີຍແຜ່ແນະນຳ ນະໂຍບາຍການສະໜອງທຶນພາຍໃນຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ຈຳນວນ 2 ຄັ້ງ ໃຫ້ກັບບັນດາ ພາກສ່ວນ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ທົ່ວປະເທດ ຜ່ານລະບົບອອນ ລາຍ ແລະ ເຂົ້າຮ່ວມໃນຫ້ອງປະຊຸມ.

ສຳເລັດການປັບປຸງບັນດາຄູ່ມື ແລະ ໄດ້ຮັບຮອງຈາກສະພາບໍລິຫານ ຄື: ຄູ່ມືລວມຂອງ ກອງທຶນປົກປັກຮັກສາ ສິ່ງແວດລ້ອມ ເຫຼັ້ມ 1, ຄູ່ມືຈັດຕັ້ງປະຕິບັດໂຄງການຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ເຫຼັ້ມ 2 ແລະ ຄູ່ມືຄຸ້ມຄອງ ໂຄງການ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ເຫຼັ້ມ 7.

ສຳເລັດການຈັດຝຶກອົບຮົມ ກ່ຽວກັບການຄຸ້ມຄອງ ໃຫ້ແກ່ 8 ໂຄງການຄື: ກົມການທະຫານທ້ອງຖິ່ນ, ກະຊວງປ້ອງ ກັນປະເທດ; ພະແນກກະສິກຳ ແລະ ປ່າໄມ້, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງບໍລິຄຳໄຊ; ພະ ແນກອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ; ພະແນກກະສິກຳ ແລະ ປ່າໄມ້ ແຂວງ ສາລະວັນ; ພະແນກຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ອັດຕະປື; ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງນ້ຳທາ; ລວມຈຳນວນຜູ້ເຂົ້າຮ່ວມທັງໝົດ 41 ທ່ານ, ຍິງ 14 ທ່ານ.

ໃນປີ 2023 ໄດ້ສຳເລັດຈັດກອງປະຊຸມສະພາບໍລິຫານ ຈຳນວນ 2 ຄັ້ງຄື: ກອງປະຊຸມສະໄໝສາມັນ ຄັ້ງທີ IX ໄດ້ ຈັດຂຶ້ນໃນວັນທີ 02 ກຸມພາ 2023 ແລະ ກອງປະຊຸມສະໄໝສາມັນ ຄັ້ງທີ X ໄດ້ຈັດຂຶ້ນໃນວັນທີ 21 ກໍລະກົດ 2023 ກອງປະຊຸມໄດ້ຮັບຮອງເອກະສານສຳຄັນຫຼາຍສະບັບ ເປັນຕົ້ນ: ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງ ກປສ, ຜົນການເຄື່ອນໄຫວວຽກງານໂຄງການສ້າງຄວາມເຂັ້ມແຂງ ໃນການອອກໃບ ຕາດິນເປັນລະບົບ ປີ 2022 ແລະ ທິດທາງແຜນການ ປີ 2023, ຄູ່ມືຄຸ້ມຄອງໂຄງການ (ຄູ່ມືລວມ-ເຫຼັ້ມ1, ຄູ່ມືຈັດຕັ້ງ ປະຕິບັດໂຄງການ-ເຫຼັ້ມ2) ແລະ ຄູ່ມືການມີສ່ວນຮ່ວມຂອງຊຸມຊົນ, ຄູ່ມືແນະນຳການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງ ກປສ, ບົດສະເໜີໂຄງການ ທີ່ຂໍນຳໃຊ້ທຶນພາຍໃນ ແລະ ວຽກອື່ນໆ.

ສຳເລັດກອງປະຊຸມຄະນະວິຊາການ ກປສ ຈຳນວນ 2 ຄັ້ງ ຄື: ຄັ້ງທີ 28 ໃນວັນທີ 29 ພຶດສະພາ 2023, ຊຶ່ງໄດ້ ລາຍງານການຈັດຕັ້ງປະຕິບັດວຽກງານຂອງ ກປສ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳໄຕມາດ 3 ປີ 2023; ຜ່ານບົດສະເໜີໂຄງການຂໍນຳໃຊ້ທຶນພາຍໃນ ກປສ ແລະ ນຳສະເໜີ ຄູ່ມືຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ. ຄັ້ງ ທີ 29 ໃນວັນທີ 29 ພະຈິກ 2023 ເຊິ່ງໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຂອງ ກປສ ແລະ ພ້ອມທັງ ພິຈາລະນາ ບົດສະເໜີໂຄງການຂໍທຶນໃໝ່.

ໃນປີ 2023 ໄດ້ຮັບບົດສະເໜີໂຄງການ ທັງໝົດ 30 ໂຄງການ ໃນນັ້ນ ໄຕມາດ I ມີ 12 ໂຄງການ ຈາກ 11 ສ່ວນ (ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ສະຫວັນນະເຂດ, ຫ້ອງການຊັບພະຍາກອນທຳ ມະຊາດ ແລະ ສິ່ງແວດລ້ອມ ເມືອງຫົ້ງສາ, ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ, ກົມອຸດສາຫະກຳ ກະຊວງ ອຸດສາຫະ ກຳ ແລະ ການຄ້າ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ບໍລິຄຳໄຊ, ຫ້ອງການ

ຊັບພະຍາກອນທຳ ມະຊາດ ແລະ ສິ່ງແວດລ້ອມ ເມືອງຮໍ່ມ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສາລະວັນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫົວພັນ, ສະຖາບັນຄົ້ນຄວ້າ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ ແຂວງຄຳມ່ວນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຄຳມ່ວນ), ຜ່ານ ການຄົ້ນຄ້ວາໂຄງການທີ່ຖືກຕ້ອງຕາມລະບຽບການ, ສອດຄ່ອງກັບພາລະບົດບາດ ແລະ ເປັນກົດຈະກຳທີ່ເຫັນວ່າເປັນ ປະໂຫຍດຕໍ່ສ່ວນລວມ ໄດ້ເຂົ້າກອງປະຊຸມຄະນະວິຊາການ (TC) ຈຳນວນ 4 ໂຄງການ ແລະ ຜ່ານມາດຖານ 3 ໂຄງການ. ໃນໄຕມາດ II ມີ 18 ໂຄງການ ຈາກ 17 ພາກສ່ວນ (ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ ເມືອງ ຫົງສາ, ສະຖາບັນຄົ້ນຄ້ວາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກະຊວງຊັບພະຍາກອນ ທຳມະ ຊາດ ແລະ ສິ່ງແວດລ້ອມ, ຄະນະວິທະຍາສາດສັງຄົມ (ຄສຄ)ມະຫາວິທະຍາໄລແຫ່ງຊາດ, ພະແນກຊັບພະຍາກອນ ທຳມະ ຊາດ ແລະ ສິ່ງແວດລ້ອມ ແຂວງ ບໍລິຄຳໄຊ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຄຳມ່ວນ, ມະຫາວິທະ ຍາໄລແຫ່ງຊາດ, ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ພະແນກກະສິກຳ ແລະ ປ່າໄມ້ (ກປຂ) ແຂວງ ຄຳມ່ວນ, ອົງການປົກຄອງເມືອງສີງ ແຂວງຫຼວງນ້ຳທາ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຊຽງຂວາງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ສາລະວັນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງຊຽງຂວາງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຮໍ່ມ, ຂະແໜງສິ່ງແວດລ້ອມ ແລະ ການ ປ່ຽນແປງດິນຟ້າອາກາດພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສາລະວັນ, ສະຫະພັນກຳມະບານ ແຂວງ ຈຳປາສັກ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫົວພັນ, ຫ້ອງການຊັບພະ ຍາກອນທຳ ມະຊາດ ແລະ ສິ່ງ ແວດລ້ອມເມືອງສີງ,ແຂວງ ຫລວນ້ຳທາ, ພະແນກ ຊສ ແຂວງຜົ້ງສາລີ) ຊຶ່ງໄດ້ຜ່ານເຂົ້າກອງປະຊຸມ ຄະນະວິຊາການ (TC) ຈຳນວນ 7 ໂຄງການ ແລະ ຜ່ານມາດຖານ 5 ໂຄງການ ເພື່ອນຳສະເໜີຕໍ່ ກອງປະຊຸມສະພາ ບໍລິຫານ.

ໃນປີ 2023 ສາມາດເຊັນສັນຍາ ສະໜອງທຶນພາຍໃນໃຫ້ທັງໝົດ 3 ໂຄງການ ລວມມູນຄ່າທັງໝົດ ຈຳນວນ 1,780,300,000 ກີບ (ໜຶ່ງຕື້ເຈັດຮ້ອຍແປດສິບລ້ານສາມແສນກີບ), ຊຶ່ງຜົນຂອງກອງປະຊຸມ ໄດ້ເຫັນດີຮັບຮອງເອົາທັງ ໝົດ 3 ໂຄງການຄື:

1) ໂຄງການການຄຸ້ມຄອງ ປ່າປ້ອງກັນແຫ່ງຊາດແຫ່ງນ້ຳຄານ ແບບມີສ່ວນຮ່ວມຂອງຊຸມຊົນ ງົບປະມານ ລວມ 708,500,000 ກີບ (ເຈັດຮ້ອຍແປດລ້ານຫ້າແສນກີບ) ຂອງ ພະແນກກະສິກຳ ແລະ ປ່າໄມ້, ກອງຄຸ້ມຄອງ ປ່າສະຫງວນ ແລະ ປ່າປ້ອງກັນ ແຂວງ ຫຼວງພະບາງ;
2) ໂຄງການສ້າງຄວາມເຂັ້ມແຂງກ່ຽວກັບການຄຸ້ມຄອງມີນລະພິດທາງອາກາດຈາກໂຮງງານອຸດສາຫະກຳປຸງແຕ່ງ ງົບປະມານລວມ 571,800,000 ກີບ (ຫ້າຮ້ອຍເຈັດສິບເອັດລ້ານແປດແສນກີບ) ຂອງກົມອຸດສາຫະ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ;
3) ໂຄງການຕິດຕາມກວດກາ ແລະ ຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ເຂດອ່າງຮັບນ້ຳ ເຊນຳກອກ ງົບປະມານ ລວມ 500,000,000 ກີບ (ຫ້າຮ້ອຍລ້ານກີບ) ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ສະຫວັນນະເຂດ.

ຕາຕະລາງ 1: ເຊັນສັນຍາສະໜອງທຶນ ໃຫ້ໂຄງການໃໝ່ ປະຈຳປີ 2023

ລ/ດ	ລາຍການ	ເປີເຊັນແຜນເບື້ອງຕົ້ນ	ສະໜອງທຶນໃໝ່ ປີ 2023 (ກີບ)	
			ແຜນສະໜອງ	ສະໜອງຕົວຈິງ
1	ຮ່ວງທຶນ ດ້ານນະໂຍບາຍ	30%	3.361.200.000	0
2	ຮ່ວງທຶນ ດ້ານຊີວະນາໆພັນ	15%	1.680.600.000	708.000.000
3	ຮ່ວງທຶນ ດ້ານສິ່ງແວດລ້ອມ	20%	2.240.800.000	571.000.000
4	ຮ່ວງທຶນ ດ້ານດິນ	15%	1.680.600.000	0
5	ຮ່ວງທຶນ ດ້ານນ້ຳ	10%	1.120.400.000	500.000.000
6	ຮ່ວງທຶນປ່ຽນແປງດິນຟ້າອາກາດ	10%	1.120.400.000	0
	ລວມທັງໝົດ	**100%**	**11.204.000.000**	**1.779.000.000**

II. ສະຫຼຸບການຈັດຕັ້ງປະຕິບັດໂຄງການທຶນພາຍໃນ ປະຈຳປີ 2023

1. ການສະໜອງທຶນຕາມແຕ່ລະຮ່ວງທຶນ

ໃນປີ 2023 ກປສ ສາມາດສະໜອງທຶນ (ຄ່ຽນເງິນ) ໃຫ້ໂຄງການຍ່ອຍໄດ້ 23 ໂຄງການ ຕາມ 6 ຮ່ວງທຶນຄື: ຮ່ວງທຶນດ້ານນະໂຍບາຍ ສາມາດຄ່ຽນເງິນໃຫ້ໂຄງການຍ່ອຍ ຈຳນວນ 1.80 ຕື້ກີບ, ຮ່ວງທຶນດ້ານຊີວະນາໆພັນ ສາມາດ ຄ່ຽນເງິນໃຫ້ໂຄງການຍ່ອຍ ຈຳນວນ 0.92 ລ້ານກີບ, ຮ່ວງທຶນດ້ານສິ່ງແວດລ້ອມ ສາມາດຄ່ຽນເງິນໃຫ້ໂຄງການຍ່ອຍ ຈຳນວນ 1.49 ຕື້ກີບ, ຮ່ວງທຶນດ້ານນ້ຳ ສາມາດຄ່ຽນເງິນໃຫ້ໂຄງການຍ່ອຍ ຈຳ ນວນ 0.30 ລ້ານກີບ, ຮ່ວງທຶນດ້ານການ ຄຸ້ມຄອງທີ່ດິນ ສາມາດຄ່ຽນເງິນໃຫ້ໂຄງການຍ່ອຍ ຈຳນວນ 0.25 ລ້ານກີບ ແລະ ຮ່ວງທຶນດ້ານການປ່ຽນແປງດິນຟ້າ ອາກາດ ສາມາດຄ່ຽນເງິນໃຫ້ໂຄງການຍ່ອຍ ຈຳນວນ 0.77 ລ້ານກີບ ແລະ ນຳໃຊ້ເຂົ້າໃນວຽກງານຄ່າບໍລິຫານ ຈຳນວນ 2.09 ຕື້ກີບ.

ຕາຕະລາງ 2: ການສະໜອງທຶນພາຍໃນໃຫ້ໂຄງການທີ່ດຳເນີນຢູ່ ຕາມ 6 ຮ່ວງທຶນ

ລ/ດ	ລາຍລະອຽດຮ່ວງທຶນ	ແຜນສະໜອງທຶນປີ 2023 ໂຄງການທີ່ຈັດຕັ້ງປະຕິບັດ	ເບີກຈ່າຍໄດ້ຕົວຈິງ (ຕາມແຜນດັດແກ້ 6 ເດືອນທ້າຍປີ 2023)		ສົມທຽບເປີເຊັນ
		ກີບ	ກີບ	ໂດລາສະຫະລັດ	
1	ຮ່ວງທຶນ ດ້ານນະໂຍບາຍ	1.900.000.000	1.809.095.240	104.361	95%
2	ຮ່ວງທຶນ ດ້ານຊີວະນາໆພັນ	1.300.000.000	1.284.047.715	53.579	99%
3	ຮ່ວງທຶນ ດ້ານສິ່ງແວດລ້ອມ	1.500.000.000	1.495.857.174	86.291	99%
4	ຮ່ວງທຶນ ດ້ານການຄຸ້ມຄອງຊັບພະຍາກອນນ້ຳ	400.000.000	318.155.000	17.505	80%
5	ຮ່ວງທຶນດ້ານການຄຸ້ມຄອງທີ່ດິນ	300.000.000	259.956.000	14.996	87%
6	ຮ່ວງທຶນ ດ້ານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	1.000.000.000	778.587.000	44.914	78%
ລວມໂຄງການຍ່ອຍ		**6.400.000.000**	**5.945.698.129**	**321.646**	**93%**
ຄ່າບໍລິຫານ		**2.793.000.000**	**2.658.387.988**	**121.063**	**95%**
ລວມທັງໝົດ		**9.193.000.000**	**8.604.086.117**	**442.709**	**94%**

2. ການຈັດຕັ້ງປະຕິບັດໂຄງການຕາມແຕ່ລະຮ່ວງທຶນ

ຕົ້ນປີ 2023 ມີໂຄງການຈັດຕັ້ງປະຕິບັດ ຈຳນວນ 43 ໂຄງການ, ມາຮອດກາງປີມີໂຄງການທີ່ສິ້ນສຸດສັນຍາ ແລະ ປິດໂຄງການ ຈຳນວນ 10 ໂຄງການ (ຮ່ວງທຶນນະໂຍບາຍ 3 ໂຄງການ, ຊີວະນາໆພັນ 5 ໂຄງການ, ມົນລະພິດ 1 ໂຄງການ ແລະ ຊັບພະຍາກອນນ້ຳ 1 ໂຄງການ) ແລະ ຫກປສ ກໍໄດ້ເຂົ້າຮ່ວມກອງປະຊຸມສະຫຼຸບປິດໂຄງການດັ່ງກ່າວ ຜ່ານລະບົບອອນລາຍ. ພ້ອມນັ້ນ, ຫກປສ ກໍໄດ້ສະໜອງທຶນ ໃໝ່ໃຫ້ 10 ໂຄງການ.

ຜ່ານການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການຍ່ອຍ ພາຍໃນປີ 2023 ກປສ ໄດ້ຮັບປິດສະຫຼຸບການຈັດຕັ້ງປະຕິບັດໂຄງການ ຈາກໂຄງການຍ່ອຍ ຈຳນວນ 25 ໂຄງການ ຄື:

1) ຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ: ສິ່ງປິດລາຍງານ ຈຳນວນ 6 ໂຄງການ , ບໍ່ໄດ້ຮັບປິດລາຍງານ ຈຳນວນ 3 ໂຄງການ ຄື: PICE 140_NNO, PICE 142_NNO ແລະ PICE 163_NNO;
2) ຮ່ວງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ: ສິ່ງປິດລາຍງານ ຈຳນວນ 6 ໂຄງການ, ບໍ່ໄດ້ຮັບປິດລາຍງານ ຈຳນວນ 4 ໂຄງການ ຄື: CBI 016_NNO, CBI 018_NNO, CBI 019_NNO ແລະ CBI 026_LPB;
3) ຮ່ວງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ: ສິ່ງປິດລາຍງານ ຈຳນວນ 8 ໂຄງການ, ບໍ່ໄດ້ຮັບປິດລາຍງານ ຈຳນວນ 4 ໂຄງການ ຄື: PC 093_HPH, PC 094_LNT, PC 095_LNT ແລະ PC 104_NNO;
4) ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ: ສິ່ງປິດລາຍງານ ຈຳນວນ 1 ໂຄງການ, ບໍ່ໄດ້ຮັບປິດລາຍງານ ຈຳນວນ 3 ໂຄງການ ຄື: SLM 020_NNO, SLM 021_NNO ແລະ SLM 027_NNO;
5) ຮ່ວງທຶນດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ: ສິ່ງປິດລາຍງານ ຈຳນວນ 2 ໂຄງການ, ບໍ່ໄດ້ຮັບປິດລາຍງານ ຈຳນວນ 2 ໂຄງການ ຄື: WRM 023_NNO ແລະ WRM 029_SVK;
6) ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ: ໄດ້ຮັບປິດລາຍງານຄົບໝົດທັງ 2 ໂຄງການ.

ບັນດາໂຄງການທີ່ຍັງບໍ່ທັນໄດ້ສິ່ງປິດລາຍງານແມ່ນລວມມີ ໂຄງການທີ່ຫາກໍ່ເຊັນສັນຍາໃນປີ 2023 ຊຶ່ງຍັງບໍ່ທັນໄດ້ຈັດຕັ້ງປະຕິບັດກິດຈະກຳ, ໂຄງການຄ້າງສະສາງແກ່ຍາວ ແລະ ໂຄງການທີ່ບໍ່ໄດ້ເຄື່ອນໄຫວກິດຈະກຳຂອງໂຄງການ.

2.1. ຮ່ວງທຶນນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ

ການສະໜອງທຶນຜ່ານຮ່ວງທຶນນະໂຍບາຍ ແມ່ນບັນດາໂຄງການຍ່ອຍໄດ້ຈັດຕັ້ງປະຕິບັດກິດຈະກຳ ຄື:

1) ໂຄງການສ້າງຄວາມເຂັ້ມແຂງໃຫ້ແນວລາວສ້າງຊາດໃນການສົ່ງເສີມ ແລະ ປົກປ້ອງສິດ-ຜົນປະໂຫຍດໃຫ້ປະຊາຊົນບັນດາເຜົ່າ (PICE 147_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ສຳເລັດການຈັດຕັ້ງປະຕິບັດກິດກອງປະຊຸມແບບມີສ່ວນຮ່ວມອົງການພຸດທະສາສະ ໜາສຳພັນລາວ ຕິດພັນກັບວຽກງານ ຂຽວສະອາດ ງາມຕາ ລວມທັງວຽກງານປຸກຈິດສຳນຶກ ໃນການປົກປັກຮັກສາສິ່ງແວດລ້ອມ ຕາມທ້ອງຖະໜົນ ຊຶ່ງມີຫຼາຍພາກສ່ວນເຂົ້າຮ່ວມເຫັນວ່າເປັນກິດຈະກຳທີ່ສຳຄັນ.
2) ໂຄງການຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ (PICE 159_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ສຳເລັດຕາມຕົວຊີ້ວັດທີ່ວາງໄວ້ ໄດ້ຈັດພິມກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງ ຈຳນວນ 20,000 ຫົວ ເພື່ອແຈກຢາຍໃຫ້ບັນດາ ກະຊວງ, ອົງການປົກຄອງທ້ອງຖິ່ນ, ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ, ບ້ານ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ, ສຳເລັດການໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງໃໝ່ ໃຫ້ກັບ

ພະນັກງານກົມທີ່ດິນ ບັນດາພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ. ໂຄງການດັ່ງກ່າວນີ້ແມ່ນໄດ້ໃຊ້ງົບປະມານ 90 ກ່ວາເປີເຊັນແລ້ວ.

3) ໂຄງການສ້າງຈິດສຳນຶກດ້ານການປົກປັກຮັກສາສິ່ງແວດລ້ອມ ໃຫ້ກົມກອງທະຫານທົ່ວກອງທັບປະຊາຊົນລາວ ໄລຍະ 3 (PICE 160_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ສຳເລັດການຈັດຕັ້ງປະຕິບັດກ່ຽວກັບການປະເມີນການສ້າງຈິດສຳນຶກ ດ້ານການປົກປັກຮັກສາສິ່ງແວດລ້ອມໃຫ້ກົມ ກອງທະຫານ ທົ່ວກອງທັບປະຊາຊົນລາວ ຊຶ່ງໄດ້ຈັດຕັ້ງປະຕິບັດຢູ່ ກອງບັນຊາການທະຫານ ແລະ ກອງພົນທະຫານຮາບທີ 2, ແຂວງໄຊຍະບູລີ; ກອງບັນຊາການທະຫານ ແລະ ກອງພົນທະຫານຮາບທີ 3 ແຂວງອຸດົມໄຊ; ຢູ່ກອງບັນຊາການທະຫານ ແລະ ກອງພົນທະຫານຮາບທີ 4, ແຂວງສະຫວັນນະເຂດ; ຢູ່ກອງບັນຊາການທະຫານ ແຂວງຫົວພັນ; ກອງບັນຊາການທະຫານ ແຂວງບໍ່ແກ້ວ; ກອງບັນຊາການທະຫານ ແຂວງຫຼວງນ້ຳທາ.

4) ໂຄງການສ້າງຄວາມເຂັ້ມແຂງໃຫ້ເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນ ສ້າງຖານຂໍ້ມູນອາຊະຍາກຳ ໃນການປົກປັກຮັກສາສັງຄົມ ແລະ ສິ່ງແວດລ້ອມ (PICE 161_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດກິດຈະກຳ ລົງເກັບກຳຂໍ້ມູນການກ່ຳອາຊະຍາກຳ ແລະ ບັນຫາສັງຄົມຢູ່ ກົມວິຊາສະເພາະທີ່ນອນຢູ່ໃນໂຄງການ ແລະ ກອງບັນຊາການ ປກສ ແຂວງ ແລະ ເມືອງທີ່ຂຶ້ນກັບ, ຈັດຝຶກອົບຮົມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງໄດ້ 2 ຄັ້ງ, ພ້ອມທັງລົງຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ ຢູ່ແຕ່ລະແຂວງ ແລະ ເມືອງ.

5) ໂຄງການສ້າງຄວາມເຂັ້ມແຂງ ແລະ ພັດທະນາສະຖິຕິ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (PICE 162_NNO) ໂຄງການດັ່ງກ່າວແມ່ນວາງກິດຈະກຳໄວ້ 14 ກິດຈະກຳ ສາມາດປະຕິບັດໄດ້ສຳເລັດ 3 ກິດຈະກຳ ໄດ້ສຳເລັດກິດຈະກຳ ເກັບກຳ, ສັງລວມ ຂໍ້ມູນມືສອງ ສະຖິຕິ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນສູນກາງ ແລະ ທ້ອງຖິ່ນ 13 ແຂວງ, ສຳເລັດການຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານດ້ານສະຖິຕິ ຂັ້ນສູນກາງໃນ 5 ຂົງເຂດ ແລະ ຂັ້ນທ້ອງຖິ່ນ 13 ແຂວງ, ສາມາດພັດທະນາຖານຂໍ້ມູນສະຖິຕິ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໂປຼແກຼມ ເອັກເຊວ ຂັ້ນພື້ນຖານໃນການປ້ອນຂໍ້ມູນ ແລະ ວິເຄາະຂໍ້ມູນສະຖິຕິ ຊສ ສຳເລັດໃນລະດັບໜຶ່ງ ເພື່ອຮັບໃຊ້ວຽກງານເຜີຍແຜ່ຂໍ້ມູນຂ່າວສານ, ສ່ວນ 11 ກິດຈະກຳແມ່ນຢູ່ຂັ້ນຕອນກຳລັງດຳເນີນ ແລະ ສືບຕໍ່ໃນປີ 2024.

6) ໂຄງການຈັດຕັ້ງປະຕິບັດແຜນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນສູນກາງ ແລະ ທ້ອງຖິ່ນ (PICE 164_NNO) ໂຄງການດັ່ງກ່າວແມ່ນວາງກິດຈະກຳໄວ້ 10 ກິດຈະກຳ ສາມາດປະຕິບັດໄດ້ສຳເລັດ 1 ກິດຈະກຳ ຄື ຈັດກອງປະຊຸມກັບຄູ່ຮ່ວມງານຕ່າງໆ ໃນຮູບແບບໂຕະມົນຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳປີ 2023, ສ່ວນ 9 ກິດຈະກຳແມ່ນຈະໂອນມາປະຕິບັດປີ 2024.

2.2. ຮ່ອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ

1) ໂຄງການຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳປຸຍ ແບບມີສ່ວນຮ່ວມກັບຊຸມຊົນ (CBI 020_XYR) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດກິດຈະກຳ ເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ກວດກາລາດຕະເວນ , ສົ່ງເສີມການຜະລິດເພື່ອປັບປຸງຊີວິດການເປັນຢູ່ ແລະ ສ້າງຈິດສຳນຶກ ແລະ ເຜີຍແຜ່ ລະບຽບກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າສະຫງວນ.

2) ໂຄງການຄຸ້ມຄອງປ່າໄມ້ ແລະ ພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃນເຂດປ່າປ້ອງກັນແຫ່ງຊາດນ້ຳງຽບ ນ້ຳມັງ (CBI 021_BKX) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ສຳເລັດການຝຶກອົບຮົມການຄຸ້ມຄອງໂຄງການ ແລະ ປະຊາຊົນກ່ຽວກັບການຄຸ້ມຄອງປ່າໄມ້/ປູກຝັງ ແລະ ລ້ຽງສັດ, ໄດ້ໄປທັດສະນະສຶກສາເບິ່ງການປູກໝາກແໜ່ງ ຢູ່ແຂວງອຸດົມໄຊ, ການລ້ຽງເຜິ້ງ ຢູ່ແຂວງຊຽງຂວາງ, ລົງຕິດຕາຊຸກຍູ້ການຜະລິດແນະນຳກ່ຽວກັບການປູກຫຍ້າລ້ຽງສັດ ຢູ່ 5 ບ້ານເປົ້າໝາຍ, ຝຶກອົບຮົມການກວດກາລາດຕະເວນ ແລະ ສ້າງແຜນຈັດສັນປ່າໄມ້ຂອງບ້ານ.

3) ໂຄງການປ້ອງກັນ ແລະ ເຝົ້າລະວັງໄຟໄໝ້ລາມປ່າເຂດປ່າສະຫງວນແຫ່ງຊາດພູພະນັງ ໃນເຂດນະຄອນຫຼວງ ແລະ ແຂວງວຽງຈັນ (CBI 022_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດການຈັດຕັ້ງ ປະຕິບັດກິດຈະກຳປຶກສາຫາລືນຳບ້ານເປົ້າໝາຍ ກ່ຽວກັບ ການສ້າງຕັ້ງທີມງານ ກວດກາລາດຕະເວນຂັ້ນບ້ານ ເພື່ອເຝົ້າລະວັງ ແລະ ຕ້ານໄຟໄໝ້ລາມປ່າ ແລະ ຜ່ານຄຳແນະນຳ ກ່ຽວກັບການດັບມອດໄຟປ່າ ຮ່ວມກັບ 21 ບ້ານ ແລະ ຕົວແທນ ຫຼື ຜູ້ປະສານງານຈາກ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈາກ 5 ເມືອງ (ສັງທອງ, ສີໂຄດຕະບອງ, ນາຊາຍທອງ ໂພນໂຮງ ແລະ ຫີນເຫີບ). ສຳເລັດກອງປະຊຸມປຶກສາຫາລື ກັບບ້ານເປົ້າໝາຍ ໂດຍມີພາກສ່ວນ ພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມ ເພື່ອຄັດເລືອກເອົາຜູ້ສະໝັກເຂົ້າຮ່ວມເປັນທີມງານກວດກາລາດຕະເວນຂັ້ນບ້ານ. ສຳເລັດການຝຶກອົບຮົມໃຫ້ທີມງານ ເຝົ້າລະວັງ ແລະ ສະກັດກັ້ນໄຟໄໝ້ລາມປ່າ ທີ່ມາຈາກ 21 ບ້ານ. ສຳເລັດການຈັດກອງປະຊຸມ ຜ່ານລະບຽບ ຮ່ວມກັບຊຸມຊົນອ່າດ້ວຍໄຟປ່າ. ຝຶກອົບຮົມໃນການປະມວນຜົນການວິເຄາະໄຟໄໝ້ລາມປ່າໃຫ້ກັບພະນັກງານ ຂັ້ນເມືອງ 10 ທ່ານ ທີ່ມາຈາກ 5 ເມືອງເປົ້າໝາຍ. ສຳເລັດຕິດຕາມຄະດີ ຫຼື ຜູ້ທີ່ລະເມີດຕໍ່ກັບລະບຽບ ກ່ຽວ ກັບໄຟໄໝ້ລາມປ່າໃນຂັ້ນບ້ານ ໃນ 21 ບ້ານ ໃນ 5 ເມືອງເປົ້າໝາຍ.

4) ໂຄງການຄຸ້ມຄອງປົກປັກຮັກສາອະນຸລັກຊີວະນາໆພັນໃນປ່າປ້ອງກັນພູເສັດ ແລະປັບປຸງຊີວິດການເປັນຢູ່ ຂອງປ/ຊແບບມີສ່ວນຮ່ວມ (CBI 023_SRV) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ຝຶກອົບຮົມ ດ້ານວັດທະນາທຳ, ອົດຄອງປະເພນີ ຕິດພັນກັບການທ່ອງທ່ຽວ ແລະ ບົດບາດຍິງ-ຊາຍ ການເຊື່ອມສານ ບົດບາດຍິງ-ຊາຍ ເຂົ້າໃນການຈັດຕັ້ງປະຕິບັດວຽກງານປ່າໄມ້ ໃຫ້ກັບທີມງານຂັ້ນແຂວງ, ຂັ້ນເມືອງ, ພະນັກງານ ເຂື່ອນໄຟຟ້າ ເຊເສັດ1-2 ແລະ ອຳນາດການປົກຄອງບ້ານ ພ້ອມດ້ວຍປະຊາຊົນທັງ 6 ບ້ານ ທີ່ນອນຢູ່ໃນ ແລະ ອ້ອມຂ້າງປ່າປ້ອງກັນພູເສັດ. ຝຶກອົບຮົມການນຳທ່ຽວ ແລະ ການປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ປະຊາຊົນ, ຝຶກອົບຮົມການອະນຸລັກ ຊັບພະຍາກອນປ່າໄມ້, ການກວດກາລາດຕະເວນ ແລະ ການອະນຸລັກສິ່ງແວດລ້ອມ ເຂດປ່າປ້ອງກັນໃຫ້ແກ່ປະຊາຊົນ, ປູກຈິດສຳນຶກໃນການອະນຸລັກ ເຜີຍແຜ່ກົດໝາຍ, ລະບຽບການຄຸ້ມຄອງປ່າ ປ້ອງກັນ ແລະ ການອະນຸລັກ ສັດນ້ຳ-ສັດປ່າ.

5) ໂຄງການຫຼຸດຜ່ອນຜົນກະທົບ ລະຫວ່າງ ຄົນ ກັບ ຊ້າງປ່າ (CBI 024_ATP) ໂຄງການແມ່ນ ສາມາດປະຕິບັດ ກິດຈະກຳຄື: ໄດ້ລົງພາກສະໜາມ ເກັບກຳຂໍ້ມູນດ້ານເສດຖະກິດ-ສັງຄົມ ໃນ 9 ບ້ານເປົ້າໝາຍ 2 ເມືອງຄື: ຊານໄຊ ແລະ ໄຊເສດຖາ, ໄດ້ຂໍ້ມູນເສດຖະກິດສັງຄົມຂອງບ້ານເປົ້າໝາຍ ແມ່ນໄດ້ຈັດບູລິມະສິດປະເພດ ຄອບຄົວ ເພື່ອສ້າງເປັນເຂດພື້ນທີ່ກຳນົດເຂດທີ່ໄດ້ຮັບຜົນກະທົບຈາກຊ້າງປ່າ ແລະ ເພື່ອວາງແຜນດຳເນີນກິດຈະ ກຳສ້າງສິ່ງຕ່າງໆເພື່ອປ້ອງກັນຊ້າງປ່າ. ສຳເລັດຈັດກອງປະຊຸມປຶກສາຫາລື ເພື່ອແກ້ໄຂບັນຫາຫຼຸດຜ່ອນຜົນ ກະທົບລະຫວ່າງຄົນກັບຊ້າງປ່າ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ. ຝຶກອົບຮົມໃຫ້ພະນັກງານຂັ້ນແຂວງ, ເມືອງ ແລະ ຊາວບ້ານ ກ່ຽວກັບການຄຸ້ມຄອງ ແລະ ອະນຸລັກຊ້າງປ່າ.

6) ໂຄງການສົ່ງເສີມການມີສ່ວນຮ່ວມຈາກຊຸມຊົນ ເພື່ອການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ແບບຍືນຍົງ (CBI 025_NNO) ໂຄງການແມ່ນ ໄດ້ງົບປະມານໃນທ້າຍປີ 2023 ດັ່ງນັ້ນ ກິດຈະກຳຈຶ່ງໄດ້ຖືກເລື່ອນໄປຈັດຕັ້ງ ປະຕິບັດໃນປີ 2024.

2.3. ຮ່ວງທຶນດ້ານສິ່ງແວດລ້ອມ ແລະ ຄອບຄຸມມິນລະພົດ

1) ໂຄງການສົ່ງເສີມການນຳໃຊ້ສີທຳມະຊາດ ເພື່ອຫຼຸດຜ່ອນການໃຊ້ສານເຄມີຍ້ອມສີ ແຂວງຫົວພັນ (PC 096_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື:ໄດ້ຈັດຊຸດຝຶກອົບຮົມໃຫ້ ປະຊາຊົນບ້ານເປົ້າໝາຍ ຂອງໂຄງການ ຊຶ່ງໄດ້ນຳສະເໜີຄວາມຮູ້ກ່ຽວກັບຄວາມອັນຕະລາຍຈາກການນຳໃຊ້ສານເຄມີຍ້ອມສີ ທີ່ສົ່ງຜົນ ກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ ພ້ອມທັງແລກປ່ຽນຜົນກະທົບຈາກສານເຄມີ ຍ້ອມສີ ແລະ ນຳສະເໜີບົດບາດຍິງ-ຊາຍ ໃນການຄຸ້ມຄອງສິ່ງແວດລ້ອມ. ຈັດຝຶກອົບຮົມ 3 ຄັ້ງ ໃຫ້ບ້ານເປົ້າ ໝາຍ ໄດ້ໃຫ້ຄວາມຮູ້ເບື້ງຕົ້ນກ່ຽວກັບ ພືດທີ່ໃຫ້ສີທຳມະຊາດ ແລະ ສົ່ງເສີມໃຫ້ປະຊາຊົນປູກພືດທົດແທນ

ແລະ ເກັບກຳຂໍ້ມູນເບື້ອງຕົ້ນ ເພື່ອສ້າງເປັນປຶ້ມຄູ່ມື ກ່ຽວກັບ ການສົ່ງເສີມການນຳໃຊ້ສີທຳມະຊາດ. ຈັດກອງປະຊຸມ ເພື່ອສ້າງແຜນຄຸ້ມຄອງການນຳໃຊ້ແຫຼ່ງບຳບັດນ້ຳເສຍຈາກ ສານເຄມີຍ້ອມສີ ໃຫ້ກັບບ້ານສະເຫຼີຍ ແລະ ບ້ານນາສາລາ.

2) ໂຄງການສ້າງເຄືອຂ່າຍການຄວບຄຸມມົນລະພິດທາງອາກາດ ແລະ ຈຸດສຸມສະສົມຄວາມຮ້ອນ ຢູ່ 4 ແຂວງ ພາກເໜືອ (PC 097_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳຫຼວດ, ເກັບກຳ ແລະ ສັງລວມ ຂໍ້ມູນແຫຼ່ງມົນລະພິດທາງອາກາດ ແລະ ຈຸດສະສົມຄວາມຮ້ອນ ຢູ່ 4 ແຂວງພາກເໜືອ (ອຸດົມໄຊ, ໄຊຍະບູລີ, ຫຼວງພະບາງ ແລະ ຫົວພັນ).
3) ໂຄງການປັບປຸງສະພາບສິ່ງແວດລ້ອມສີຂຽວຕາມເສັ້ນທາງເລກທີ 13, 42 ແລະ ທາງເຊື່ອມຕໍ່ ຈາກທາງເລກທີ 13 ຫາທາງສາລາຂຽວດົງຈອງ (PC 098_CHP) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດການປູກຕົ້ນໄມ້ແຄມທາງ ຈຳນວນ 500 ຕົ້ນ ພ້ອມທັງການບົວລະບັດຮັກສາຕົ້ນໄມ້. ໄດ້ຈັດປະຊຸມຮ່ວມກັບທີມງານໂຄງການ, ໜ່ວຍງານທີ່ກ່ຽວຂ້ອງ, ອຳນາດການປົກຄອງບ້ານ ແລະ ຫົວໜ່ວຍທຸລະກິດ ເພື່ອ ປູກຈິດສຳນຶກ ແລະ ລົງເຜີຍແຜ່ໃຫ້ນັກຮຽນ ແລະ ປະຊາຊົນທີ່ນອນໃນພື້ນທີ່ໂຄງການ ກ່ຽວກັບຄວາມສຳຄັນຂອງວຽກງານ ສິ່ງແວດລ້ອມ ແລະ ການປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງດ້ວຍການມີສ່ວນຮ່ວມໃນການບົວລະບັດຮັກສາຕົ້ນໄມ້ຂອງໂຄງການ.
4) ໂຄງການປັບປຸງສະພາບສິ່ງແວດລ້ອມສີຂຽວຕາມເສັ້ນທາງຫຼວງໃຈການເມືອງ ແລະ ສວນສາທາລະນະ ນະຄອນປາກເຊ (PC 099_CHP) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດການປູກຕົ້ນໄມ້ແຄມທາງ ຈຳນວນ 500 ຕົ້ນ ພ້ອມທັງການບົວລະບັດຮັກສາຕົ້ນໄມ້. ໄດ້ຈັດປະຊຸມຮ່ວມກັບທີມງານໂຄງການ, ໜ່ວຍງານທີ່ກ່ຽວຂ້ອງ, ອຳນາດການປົກຄອງບ້ານ ແລະ ຫົວໜ່ວຍທຸລະກິດ ເພື່ອ ປູກຈິດສຳນຶກ ແລະ ລົງເຜີຍແຜ່ໃຫ້ນັກຮຽນ ແລະ ປະຊາຊົນທີ່ນອນໃນພື້ນທີ່ໂຄງການ ກ່ຽວກັບຄວາມສຳຄັນຂອງວຽກງານ ສິ່ງແວດລ້ອມ ແລະ ການປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງດ້ວຍການມີສ່ວນຮ່ວມໃນການບົວລະບັດຮັກສາຕົ້ນໄມ້ຂອງໂຄງການ.
5) ໂຄງການຄຸ້ມຄອງການນຳໃຊ້ສານເຄມີໃນຂົງເຂດອຸດສະຫະກຳປຸງແຕ່ງທີ່ຕິດພັນກັບການຮັກສາສິ່ງແວດລ້ອມ ພາຍໃນ 10 ເມືອງ (PC 100_KHM) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ຈັດກອງປະຊຸມເຜີຍແຜ່ນິຕິກຳ ກ່ຽວກັບເຄມີຂັ້ນແຂວງ ຈຳນວນ 2 ຄັ້ງ ຢູ່ໂຮງຮຽນ ມສ ທ່າແຂກ ແລະ ໂຮງຮຽນ ມິດຕະພາບ ຄຳມ່ວນ-ກວາງບິ່ງ ຜູ້ເຂົ້າຮ່ວມແມ່ນ ນັກຮຽນ ມໍ ປາຍ ແລະ ຜູ້ປະກອບການທີ່ທຳການຜະລິດທັງຂະໜາດນ້ອຍ-ຂະໜາດໃຫຍ່ ທີ່ມີການນຳໃຊ້ສານເຄມີ ເພື່ອໃຫ້ຮັບຮູ້ເຖິງຜົນຮ້າຍອັນຕະລາຍ, ວິທີເກັບຮັກສາ ແລະ ຂັ້ນຕອນນຳເຂົ້າສານເຕມີຕ່າງໆ, ກອງປະຊຸມໄດ້ນຳເອົາບັນດານິຕິກຳທີ່ກ່ຽວຂ້ອງໃນການນຳໃຊ້ ແລະ ການເກັບກຳຮັກສາຄຸ້ມຄອງທາດເຄມີ.
6) ໂຄງການສ້າງໂຮງຮຽນ ແລະ ພະແນກການ ໃຫ້ກາຍເປັນສະຖານທີ່ຕົວແບບດ້ານສິ່ງແວດລ້ອມ ຂຽວສະອາດງາມຕາ ຢູ່ນະຄອນຫວງພະບາງ (PC 101_LPB) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ຝຶກອົບຮົມ ໃນການສ້າງຈິດສຳນຶກໃນການຈັດການສິ່ງເສດເຫຼືອ ແລະ ຮັກສາສິ່ງແວດລ້ອມ ໃນ 4 ພະແນກການ ໃນ ນະຄອນຫຼວງວຽງຈັນ. ສ້າງລະບົບທະນາຄານຂີ້ເຫຍື້ອ ແລະ ສະໜອງສາງເກັບມ້ຽນຂີ້ເຫຍື້ອ ໃຫ້ໂຮງຮຽນ.
7) ໂຄງການປັບປຸງທັດສະນີຍະພາບ ເດີ່ນໜ້າ ກຊສ ໃຫ້ຂຽວສະອາດງາມຕາ ກາຍເປັນກະຊວງສີຂຽວ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມເສັ້ນທາງຕັດໃໝ່ໜອງບົກ (PC 102_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ລົງຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງໃຫ້ອາສາສະມັກບ້ານເປົ້າໝາຍໃຫ້ຮັບຮູ້ກ່ຽວກັບວຽກງານປົກປັກຮັກສາສິ່ງແວດລ້ອມ ພາຍໃນເມືອງ ສີໂຄດຕະບອງ, ຢູ່ຕາມເສັ້ນທາງຕັດໃໝ່ໜອງບົກ ມີ ບ້ານໜອງບົກ , ໜອງບົວທອງເໜືອ, ໜອງບົວທອງໃຕ້, ດົງນາໂຊກ ໃນການມີສ່ວນຮ່ວມຈັດຕັ້ງປະຕິບັດວຽກງານປົກປັກຮັກສາສິ່ງແວດລ້ອມ. ລົງຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງໃຫ້ອາສາສະມັກບ້ານເປົ້າໝາຍ ພາຍໃນເມືອງຈັນທະບູລີ ບ້ານ ບົງບໍ່ນາ, ໜອງທາເໜືອ, ດອນແດງ. ປັບປຸງທັດສະນີຍະພາບ ເດີ່ນໜ້າກະຊວງ ຊັບພະຍາກອນທຳ

ມະຊາດ ແລະ ສິ່ງແວດລ້ອມ ໃຫ້ຂຽວສະອາດ ງາມຕາ ແລະ ປົກປັກຮັກສາສະພາບແວດລ້ອມ ຕາມແສ້ນທາງ ຕັດໃໝ່ ໝອງບົກ.

8) ໂຄງການສ້າງບ້ານ, ໂຮງຮຽນຕົວແບບຂຽວສະອາດງາມຕາ ແຂວງໄຊຍະບຸລີ (PC 103_XYR) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂັ້ນແຂວງ ແລະ ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 11 ເມືອງ ຂອງແຂວງ ໄຊຍະບຸລີ ໃນການນຳໃຊ້ຄູ່ ມື, ແບບຟອມ ວຽກງານ ຂຽວສະອາດ ງາມຕາ ມີຜູ້ເຂົ້າຮ່ວມທັງໝົດ 40 ທ່ານ, ຍິງ 9 ທ່ານ. ຝຶກອົບຮົມໃຫ້ ພະນັກງານຂັ້ນເມືອງ, ບ້ານ ແລະ ໂຮງຮຽນ ມີຜູ້ເຂົ້າຮ່ວມທັງໝົດ 256 ທ່ານ, ຍິງ 44 ທ່ານ. ລົງສະໜາມ ເກັບກຳຂໍ້ມູນ ແລະ ວິເຄາະຂໍ້ມູນນຳບັນດາ ຫ້ອງການ, ບ້ານ ແລະ ໂຮງຮຽນ, ການສ້າງລະບຽບ, ຄັດເລືອກ ອາສາສະໝັກບ້ານ ວຽກງານ ຂຽວ ສະອາດ ງາມຕາ, ຜ່ານການຈັດຕັ້ງປະຕິບັດວຽກງານແມ່ນສາມາດອອກ ນາມມະຍົດ ຮັບຮອງເປັນບ້ານ ສີຂຽວ ສະອາດ ງາມຕາ ໄດ້ 17 ບ້ານ, ຮັບຮອງເປັນໂຮງຮຽນ ສີຂຽວ ສະອາດ ງາມຕາ ໄດ້ 7 ໂຮງຮຽນ, ຮັບຮອງເປັນສຳນັກງານຫ້ອງການຂຽວ ສະອາດ ງາມຕາ ໄດ້ 5 ແຫ່ງ.

2.4. ຮ່ວງທຶນການຄຸ້ມຄອງທີ່ດິນແບບຍືນຍົງ

1) ໂຄງການສ້າງຂີດຄວາມເຂັ້ມແຂງ ໃນວຽກງານຄຸ້ມຄອງທີ່ດິນ-ບໍລິຫານທີ່ດິນໃຫ້ເປັນທັນສະໄໝ (SLM 026_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດການຝຶກອົບຮົມຢູ່ 3 ເມືອງ ຂອງ 3 ແຂວງ ສາມາດສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານຂັ້ນທ້ອງຖິ່ນ ສາມາດນຳໃຊ້ລະບົບເຄືອຂ່າຍຂໍ້ ມູນຂ່າວສານ ຮັບໃຊ້ວຽກງານຂຶ້ນທະບຽນ ແລະ ຈົດທະບຽນນິຕິກຳກ່ຽວກັບທີ່ດິນ ພ້ອມທັງສາມາດແກ້ໄຂ ບັນຫາພື້ນຖານໃນການນຳໃຊ້ລະບົບດັ່ງກ່າວດ້ວຍຕົນເອງ, ຊຶ່ງໄດ້ຝຶກໃຫ້ ພຊສ ແຂວງ ແລະ ຫຊສ ເມືອງເປົ້າ ໝາຍ ຄື: ຫຊສ ເມືອງຈອມເພັດ ແຂວງຫຼວງພະບາງ, ຫຊສ ເມືອງນາໝໍ້ ແຂວງອຸດົມໄຊ, ເມືອງລະມາມ ແຂວງເຊກອງ. ຝຶກອົບຮົມ ໃຫ້ພະນັກງານວິຊາການກ່ຽວກັບການສະແກນແຜນທີ່ຕາດິນ, ການດັດປັບແຜນທີ່, ການແຕ້ມແຜນທີ່ຄືນໃໝ່ ແລະ ມາດຕະຖານການເກັບຮັກສາແຜນທີ່ຕາດິນ ໄວ້ໃນລະບົບຖານຂໍ້ມູນລາວແລນ ເລັກ ຢູ່ 3 ແຂວງເປົ້າໝາຍຄື: ນະຄອນຫຼວງ, ໄຊຍະບຸລີ ແລະ ສະຫວັນນະເຂດ.

2.5. ຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ

1) ໂຄງການອະນຸລັກແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດ ຮ່ວມກັບຊຸມຊົນເຂດໜອງຟ້າ ໄລຍະ 2 (WRM 027_ATP) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ສຳເລັດການຝຶກອົບຮົມສິ່ງເສີມສີມືແຮງງານ ແລະ ພຸມປັນຍາຂອງຊຸມຊົນທ້ອງຖິ່ນ ໃນບ້ານເປົ້າໝາຍຂອງ ໂຄງການ 4 ບ້ານຄື: ບ້ານດາກບ໊ອກ, ບ້ານວັງຕັດໃຫຍ່, ບ້ານຢຽງດາກ ແລະ ບ້ານໜອງຟ້າ ໃນການລ້ຽງສັດປີກ ແລະ ໝູ ໃຫ້ແກ່ປະຊາຊົນ. ສຳເລັດການເຜີຍແຜ່ ລະບຽບກົດໝາຍຕ່າງໆ ທີ່ຕິດພັນກັບການອະນຸລັກແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດຮ່ວມກັບຊຸມຊົນ ເຂດໜອງຟ້າ ແລະ ເຮັດກິດຈະກຳການອະນຸລັກສິ່ງແວດລ້ອມໃຫ້ແກ່ຊຸມຊົນ ແລະ ນັກຮຽນ 4 ບ້ານເປົ້າໝາຍ ຂອບເຂດໂຄງການ. ໄດ້ລົງສະໜາມຕິດຕາມຄຸນນະພາບນ້ຳ 1 ຄັ້ງ.

2) ໂຄງການຄຸ້ມຄອງອ່າງຮັບນ້ຳ ນ້ຳພາວ ເມືອງຄຳເກີດ ແຂວງບໍລິຄຳໄຊ (WRM 028_BKX) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ຈັດຝຶກອົບຮົມກ່ຽວກັບການໂຄສະນາ ແລະ ສ້າງຈົດສຳນຶກກ່ຽວກັບຊັບພະຍາ ກອນນ້ຳໃຫ້ພາກສ່ວນກ່ຽວຂ້ອງຂັ້ນເມືອງ, ຫ້ອງວ່າການເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ຫ້ອງການສຶກສາ ແລະ ກິລາ, ຫ້ອງການແຜນການ ແລະ ລົງທຶນ, ຫ້ອງການອຸດສາຫະກຳ ແລະ ການຄ້າ, ຫ້ອງການກະສິກຳ ແລະ ປ່າໄມ້ ແລະ ສະຫະພັນແມ່ຍິງເມືອງ. ຈັດຝຶກອົບຮົມກ່ຽວກັບການ ຕິດຕາມກວດກາຄຸນນະພາບນ້ຳໃຕ້ດິນ ແລະ ນ້ຳໜ້າດິນ ໃຫ້ພາກສ່ວນກ່ຽວຂ້ອງ. ລົງສຳຫຼວດ ເກັບກຳຂໍ້ມູນ ທາງກາຍຍະພາບ ອ່າງຮັບນ້ຳພາວໃນນັ້ນ ລວມມີ ຂະໜາດຂອງອ່າງຮັບນ້ຳ, ປະລິມານນ້ຳໜ້າດິນ ແລະ ຄຸນ ນະພາບນ້ຳທົ່ວໄປ. ລົງເກັບກຳນ້ຳໃຕ້ດິນຂອງ ບັນດາໂຄງການພັດທະນາຕ່າງໆ ເຊັ່ນ: ບໍ່ແຮ່, ກະສິກຳລະດູແລ້ງ

ແລະ ອື່ນໆ. ລົງກຳນົດຈຸດ ຕິດຕາມຄຸນນະພາບນ້ຳໜ້າດິນ ແລະ ກຳນົດຈຸດສ່ຽງໄພນ້ຳຖ້ວມ ແລະໄພແຫ້ງແລ້ງ ໃນອ່າງຮັບນ້ຳພາວ.

2.6. ຮ່ອງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ

1) ໂຄງການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ເພື່ອຫຼຸດຜ່ອນຄວາມສ່ຽງໄພພິບັດໃນ ສປປ ລາວ (CC 001_NNO) ໂຄງການແມ່ນ ສາມາດປະຕິບັດ ກິດຈະກຳຄື: ຈັດຝຶກອົບຮົມກ່ຽວກັບວຽກງານໂຄສະນາທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ຜ່ານສື່ຕ່າງໆ ເຊັ່ນ: ວິທະຍຸ, ໂທລະພາບ, ໜັງສືພິມ ແລະ ວາລະສານ ທີ່ແຂວງສະຫວັນນະເຂດ ແລະ ແຂວງເຊກອງ. ທົບທວນ ບັນດາບົດຄົ້ນຄ້ວາ ແລະ ເອກະສານຕ່າງໆ ແລະ ຈັດກອງປະຊຸມປຶກສາຫາລືກ່ຽວກັບແບບສອບຖາມ ຊຶ່ງບົດ ຄົ້ນຄ້ວາດັ່ງກ່າວສາມາດນຳໃຊ້ເຂົ້າໃນການວາງແຜນການຈັດຕັ້ງປະຕິບັດກິດຈະກຳເພື່ອຫຼຸດຜ່ອນບັນຫາຊ່ອງ ຫວ່າງຄວາມບໍ່ສະເໝີພາບຍິງ-ຊາຍ ແລ້ວກໍ່ໄດ້ມີກອງປະຊຸມຜ່ານບົດຄົ້ນຄ້ວາ ໂດຍການເຂົ້າຮ່ວມຈາກ ພາກສ່ວນກ່ຽວຂ້ອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງກະສິກຳ ແລະ ປ່າໄມ້, ສະຫະພັນແມ່ຍິງແຂວງ, ເມືອງ, ພະແນກ ຊສ ແຂວງ, ເມືອງ, ພະແນກແຮງງານ ແລະ ສະຫວັດດີການ ແຂວງ ແລະ ເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳເມືອງ.
2) ໂຄງການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນການຮັບມືກັບການປ່ຽນແປງດິນຟ້າອາກາດການປ້ອງກັນ ແລະ ຫຼຸດ ຜ່ອນຕາມຄວາມສ່ຽງໄພພິບັດ (CC 002_NNO) ໂຄງການແມ່ນ ສາມາດປະຕິບັດກິດຈະກຳຄື: ຈັດກອງ ປະຊຸມຂັ້ນສູນກາງ ແລະ ທ້ອງຖິ່ນ ມີກົມກອງທີ່ກ່ຽວຂ້ອງພາຍໃນກະຊວງປ້ອງກັນປະເທດເຂົ້າຮ່ວມ ແລະ ກະຊວງທີ່ກ່ຽວຂ້ອງ ຊຶ່ງບັນດາກົມກອງໄດ້ຮັບຮູ້ ກ່ຽວກັບຄວາມໝາຍຄວາມສຳຄັນວຽກງານໄພພິບັດ ແມ່ນໜ້າ ທີ່ຂອງໝົດທຸກຄົນໃນສັງຄົມຕ້ອງໄດ້ພ້ອມກັນດຳລົງຊີວິດຢ່າງມີສະຕິ ແລະ ມີຄວາມຮັບຜິດຊອບສູງຕໍ່ວຽກ ໄພພິບັດ ແລະ ສິ່ງແວດລ້ອມ. ສ້າງຄູຝຶກໄດ້ຈຳນວນຫຼາຍ ເພື່ອຊ່ວຍໄປເຜີຍແຜ່ໃຫ້ພະນັກງານນັກຮົບໃນກົມ ກອງຂອງຕົນສັງກັດຢູ່ ໃຫ້ເຂົ້າໃຈບັນຫາສິ່ງແວດລ້ອມ ແລະ ບັນຫາໄພພິບັດ ເພື່ອກຽມຄວາມພ້ອມໃນການຮັບ ມື ແລະ ປ້ອງກັນ ບັນຫາກ່ອນເກີດ ໃຫ້ມີປະສິດຕິພາບສູງຂຶ້ນ ແລະ ຈັດພິມປຶ້ມຄູ່ມືກ່ຽວກັບວຽກງານດັ່ງກ່າວ ເພື່ອເຜີຍແຜ່ໃຫ້ທົ່ວຊຸມຊົນມີຄວາມຕື່ນຕົວສູງໃນການປ້ອງກັນບັນຫາໄພພິບັດໃນອະນາຄົດ. ຝຶກອົບຮົມໃນ 30 ບ້ານເປົ້າໝາຍ. ສຳຫຼວດພື້ນທີ່ເຂດມີຄວາມສ່ຽງຂອງໂຄງການໃນແຕ່ລະຊຸມຊົນ ເພື່ອກຳນົດວິທີການປ້ອງ ກັນ ຮັບມືແກ້ໄຂບັນຫາໄພພິບັດ ແລະ ການພັດທະນາຊຸມຊົນ ເກັບກຳສຳຫຼວດຕາມແບບຟອມ.

3. ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການເງິນກູ້

- ລົງຕິດຕາມ ແລະ ຊຸກຍູ້ ການສະຫຼຸບສະສາງງົບປະມານຂອງ ໂຄງການຍ່ອຍ ຈຳນວນ 9 ໂຄງການ (ໂຄງການ ໂທລະພາບແຫ່ງຊາດ, ໂຄງການຂອງຄະນະວິທະຍາສາດສິ່ງແວດລ້ອມ, ແຂວງຄຳມ່ວນ 2 ໂຄງການ ແຂວງ ໄຊ ສົມບຸນ, ສາລະວັນ, ຈຳປາສັກ 2 ໂຄງການ ແລະ ອັດຕະປື) ເພື່ອລາຍງານຄືນຕາມທິດຊີ້ນຳຂອງ ສກປສ;
- ລົງຕິດຕາມໂຄງການເງິນກູ້ທີ່ຍັງຄ້າງຊຳລະທັງໝົດ ຈຳນວນ 11 ໂຄງການ ເພື່ອເລັ່ງທວງຕົ້ນທຶນ ແລະ ດອກເບ້ຍ, ຊຶ່ງສາມາດເກັບຕົ້ນທຶນ ແລະ ດອກເບ້ຍໄດ້ 5 ໂຄງການ ເປັນເງິນທັງໝົດ 75.000.000 ກີບ. ນອກນັ້ນ, ຍັງມີ 6 ໂຄງການ ທີ່ຍັງບໍ່ສາມາດຈ່າຍ ທັງຕົ້ນທຶນ ແລະ ດອກເບ້ຍ;
- ສືບຕໍ່ຕິດຕາມການຊຳລະໜີ້ຕ້ອງສົ່ງຂອງ 4 ໂຄງການຄື: 1). ຕິດຕາມການປະຕິບັດຄຳຕັດສິນຂອງສານຕໍ່ໂຄງການ ຂອງ ທ່ານ ດາວເພັດ ອຸດຕະວົງ 2 ໂຄງການ (ສານຕັດສິນໃຫ້ຂາຍຊັບສິນເພື່ອໃຊ້ໜີ້ຄືນ) ຊຶ່ງປະຈຸບັນຢູ່ໃນຂັ້ນ ຕອນການປະກາດຂາຍຫຼັກຊັບ; 2) ຫກປສ ຮ່ວມກັບກົມກອງກ່ຽວຂ້ອງ ຂອງ ກຊສ ໄດ້ລົງຊຸກຍູ້ການໄກ່ເກ່ຍ ໂຄງການຂອງ ທ່ານ ວິລັດ ລາວັນພອນ 2 ໂຄງການ ຊຶ່ງປະຈຸບັນຢູ່ຂັ້ນຕອນການກະກຽມສະເໜີເຂົ້າຂະບວນການ ຍຸຕິທຳ. ພ້ອມນັ້ນ, ກໍໄດ້ລົງຊຸກຍູ້ໂຄງການເງິນກູ້ອື່ນເປັນຕົ້ນ: ໂຄງການຂອງ ທ່ານ ຊຽງຈອມ ລັດດາສີ ຢູ່ແຂວງເຊ

ກອງ ແລະ ໂຄງການຂອງ ທ່ານ ບຸນມີ ອັນດາວົງໄຊ ຢູ່ແຂວງສາລະວັນ. ຜົນການລົງຊຸກຍູ້ດັ່ງກ່າວ ກໍໄດ້ເຮັດບົດລາຍງານໃຫ້ສະພາບໍລິຫານ ກປສ ໃນກອງປະຊຸມຄັ້ງທີ XI.

III. ການຕິດຕາມ ແລະ ປະເມີນຜົນໂຄງການຍ່ອຍ

ໃນປີ 2023 ໄດ້ມີການລົງຊຸກຍູ້ ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດໂຄງການ ເຊັ່ນ:

- ລົງຕິດຕາມ ແລະ ຊຸກຍູ້ ການສະຫຼຸບສະສາງງົບປະມານຂອງ ໂຄງການຍ່ອຍ ຈຳນວນ 9 ໂຄງການ (ໂຄງການ ໂທລະພາບແຫ່ງຊາດ, ໂຄງການຂອງຄະນະວິທະຍາສາດສິ່ງແວດລ້ອມ, ແຂວງຄຳມ່ວນ 2 ໂຄງການ ແຂວງ ໄຊສົມບຸນ, ສາລະວັນ, ຈຳປາສັກ 2 ໂຄງການ ແລະ ອັດຕະປື) ເພື່ອລາຍງານຄືນຕາມທິດຊີ້ນຳຂອງ ສກປສ;
- ລົງຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການຢູ່ ແຂວງ ບໍລິຄຳໄຊ, ແຂວງ ສາລະວັນ, ແຂວງ ຂຳປາສັກ ແລະ ແຂວງອັດຈະປື ລັນທີ 21 ສິງຫາ - 04 ກັນຍາ 2023 ປະກອບມີ 5 ໂຄງການ ຄື:
    1) ໂຄງການປັບປຸງຄວາມອາດສາມາດໃຫ້ແກ່ບ້ານ ໃນການຄຸ້ມຄອງປ່າໄມ້ ແລະ ພັດທະນາຊີວິດການເປັນຢູ່ ຂອງປະຊາຊົນໃຫ້ດີຂຶ້ນ (CBI 021 BKX);
    2) ໂຄງການຄຸ້ມຄອງປົກປັກຮັກສາອະນຸລັກຊີວະນາໆພັນໃນປ່າປ້ອງກັນພູເສັດ ແລະ ປັບປຸງ ຊີວິດການເປັນ ຢູ່ ຂອງປະຊາຊົນ ແບບມີສ່ວນຮ່ວມ (CBI 023 SRV);
    3) ໂຄງການປັບປຸງສະພາບສິ່ງແວດລ້ອມສີຂຽວຕາມເສັ້ນທາງເລກທີ13,ເລກທີ 42 ແລະ ທາງເຊື່ອມຕໍ່ຈາກ ທາງເລກທີ 13 ຫາ ເສັ້ນທາງສາລາຂຽວດົງຈອງ ຄວາມຍາວ 3.709 ແມັດນະຄອນປາກເຊ (PC 98 CHP);
    4) ໂຄງການປັບປຸງສະພາບສິ່ງແວດລ້ອມສີຂຽວຕາມເສັ້ນທາງຫຼວງໃຈກາງເມືອງ ແລະ ສາທາລະນະ ນະຄອນປາກເຊ, ແຂວງຈຳປາສັກ (PC 99 CHP);
    5) ໂຄງການອະນຸລັກແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດຮ່ວມກັບຊຸມຊົນເຂດໜອງຟ້າ (WRM 027 ATP).

3.1. ຕີລາຄາການຈັດຕັ້ງປະຕິບັດ

- ຕີລາຄາການຈັດຕັ້ງປະຕິບັດຂອງທຶນພາຍໃນ ໃນປີ 2023 ເຫັນວ່າໂຄງການຍ່ອຍສາມາດຈັດຕັ້ງປະຕິບັດກິດຈະກຳ ຂອງຕົນເອງໄດ້ ແຕ່ຍັງບໍ່ທັນໄດ້ສຳເລັດຕາມແຜນ ຍ້ອນໄດ້ຮັບງົບປະມານຊ້ຳຈຶ່ງໄດ້ເລື່ອນກິດຈະກຳອອກໄປ;
- ໂຄງການຍ່ອຍແມ່ນໄດ້ເອົາໃຈໃສ່ໃນການສົ່ງບົດສະຫຼຸບລາຍງານປະຈຳປີ 2023 ຫຼາຍຂຶ້ນ ເມື່ອທຽບໃສ່ປີຜ່ານມາ;
- ເປີເຊັນການສະໜອງງົບປະມານໃຫ້ໂຄງການຍ່ອຍເຫັນວ່າບັນລຸໄດ້ 94% ເທື່ອທຽບກັບງົບປະມານປະຈຳປີ.

3.2. ຂໍ້ສະດວກ ຂໍ້ຫຍຸ້ງຍາກ ແລະ ບົດຮຽນ ທີ່ຖອດຖອນໄດ້

ຂໍ້ສະດວກ:

- ຍ້ອນມີການຊີ້ນຳ ຈາກຄະນະນຳຫ້ອງການ ກປສ ຈຶ່ງເຮັດໃຫ້ຫຼາຍກິດຈະກຳຂອງທຶນພາຍໃນ ໄດ້ຮັບການຈັດຕັ້ງ ປະຕິບັດ ແລະ ແກ້ໄຂບັນຫາໄດ້ທັນຕາມກຳນົດເວລາ;
- ຍ້ອນມີນະໂຍບາຍການສະໜອງທຶນ ຈຶ່ງເຮັດໃຫ້ການພິຈາລະນາຮັບໂຄງການຕ່າງໆ ເປັນໄປຕາມຂັ້ນຕອນ ແລະ ມີ ຫຼັກການຄັກແນ່ ເຮັດໃຫ້ຜູ້ສະເໜີຂໍທຶນຮັບຮູ້ໄດ້ເຖິງຈຸດປະສົງ ແລະ ຂົງເຂດທີ່ຈະສະເໜີຂໍທຶນໄດ້.

ຂໍ້ຫຍຸ້ງຍາກ:

- ການປັບປຸງກົງຈັກການຈັດຕັ້ງພາຍໃນຂະແໜງການ ຊຶ່ງມີການຊັບປ່ຽນຕຳແໜ່ງງານ ກໍ່ເປັນບັນຫາໜຶ່ງທີ່ເຮັດໃຫ້ ການຈັດຕັ້ງປະຕິບັດໂຄງການພົບຄວາມຫຍຸ້ງຍາກໃນໄລຍະຜ່ານມາ;

- ບັນຫາທີ່ພົບຂອງຂອງການຈັດຕັ້ງປະຕິບັດໂຄງການແມ່ນບໍ່ສາມາດສະໜອງງົບປະມານໄປຕາມແຜນໄຕມາດ ຈຶ່ງ ເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳຊັກຊ້າ ແລະ ບໍ່ໄປຕາມແຜນທີ່ວາງໄວ້.

ບົດຮຽນທີ່ຖອດຖອນໄດ້

- ການຂຶ້ນແຜນງົບປະມານຕ້ອງໄດ້ຊຸກຍູ້ໃຫ້ໂຄງການ ກະກຽມແຜນລ່ວງໜ້າ ໃຫ້ສົ່ງຫາ ກປສ ທັນຕາມກຳນົດເວລາ;
- ຕ້ອງໄດ້ມີການປະສານສົມທົບກັບກະຊວງການເງິນ ກ່ຽວກັບຂະບວນການຂໍຄ່ຽນເງິນ ເພື່ອໃຫ້ການອະນຸມັດງົບ ປະມານທັນຕາມແຕ່ລະໄຕມາດ.

IV. ແຜນການຈັດຕັ້ງປະຕິບັດ ປະຈຳປີ 2024

1) ການສະໜອງທຶນໃຫ້ແຕ່ລະຮ່ວງທຶນ

1. ການສະໜອງທຶນຜ່ານຮ່ວງທຶນນະໂຍບາຍ ສະເພາະທຶນພາຍໃນ ຈຳນວນ 3 ຕື້ ຈະສຸມໃສ່ວຽກງານຄື: (1) ສະໜັບສະໜູນໂຄງການຂະ ໜາດນ້ອຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ (ພຊສ/ຫຊສ) ໃນການປະຕິບັດ ພາລະບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ; (2) ສະໜັບສະ ໜູນການຈັດຕັ້ງປະຕິບັດຂອງຄະນະກຳມະການຕ່າງໆເຊັ່ນ: ສະພາບໍລິຫານ ແລະ ຄະນະວິຊາການ ກປສ; (3) ສະໜັບສະໜູນການພັດທະນາ, ປັບປຸງເຜີຍແຜ່ຂໍ້ມູນຂ່າວສານ, ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; (4) ສະ ໜັບສະໜູນການສ້າງຖານຂໍ້ມູນ ແລະ ລະບົບການລົງທະບຽນ, ລະຫັດຂອງຂໍ້ມູນກ່ຽວກັບຊັບພະຍາກອນທຳ ມະ ຊາດ ແລະ ສິ່ງ ແວດລ້ອມ, ການຄົ້ນຄວ້າ, ເຄືອຄ່າຍເຜີຍແຜ່, ມາດຕະການແກ້ໄຂບັນຫາສຸກເສີນກ່ຽວກັບ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; (5) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.
2. ການສະໜອງທຶນຜ່ານຮ່ວງທຶນຊີວະນາໆພັນ ຈຳນວນ 1,6 ຕື້ ຈະສຸມໃສ່ວຽກງານຄື: (1) ສ້າງ ແລະ ຈັດຕັ້ງ ປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້ຂອງຂະແໜງການທີ່ກ່ຽວຂ້ອງຂັ້ນ ສູງກາງ ແລະ ທ້ອງຖິ່ນ; (2) ສຳຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າ ພ້ອມທັງມີການຕິດຕາມກວດກາ ການຄຸ້ມຄອງ ແລະ ນຳໃຊ້ປ່າແຕ່ລະປະເພດ; (3) ສົ່ງເສີມການເກັບກຳຂໍ້ມູນ, ການຂຶ້ນບັນຊີ ແລະ ການຄາດຄະເນ ມູນຄ່າຊັບພະຍາກອນທຳມະຊາດ; (4) ສົ່ງເສີມການອະນຸລັກພັນພືດ, ພັນສັດທີ່ຫາຍາກ ແລະ ໃກ້ຈະສູນພັນ ລວມທັງການປົກປັກຮັກສາທີ່ຢູ່ອາໃສຂອງພືດ ແລະ ສັດດັ່ງກ່າວ; (5) ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອ ປົກປັກຮັກສາປ່າຍອດນ້ຳ ແລະ ເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນໃຫ້ ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ ແລະ ຊຸກຍູ້ການຂະຫຍາຍຕົວເສດຖະກິດ; (6) ສົ່ງເສີມການປູກປ່າ ແລະ ຟື້ນຟູປ່າໃສ່ດິນປອກໂຫລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ປົກຫຸ້ມຂອງປ່າ ແລະ ຍົກລະ ດັບຊີວິດ ການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ; (7) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກສະພາບໍລິ ຫານ ກປສ.
3. ການສະໜອງທຶນຜ່ານຮ່ວງທຶນສິ່ງແວດລ້ອມ ຈຳນວນ 2 ຕື້ ຈະສຸມໃສ່ວຽກງານຄື: (1) ຈັດຕັ້ງປະຕິບັດກົນໄກ ໃນການສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີປະສິດທິຜົນ, ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງ ແວດ ລ້ອມ ແລະ ການຜະລິດທີ່ສະອາດ; (2) ສືບຕໍ່ຍົກສູງຂະບວນການສຶກສາ ແລະ ສ້າງຈິດສຳນຶກກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາ ກອນທຳມະຊາດແບບຍືນຍົງ; (3) ຈັດຕັ້ງປະຕິບັດ ນິຕິກຳ, ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ, ຄູ່ມືແນະນຳ ແລະ ກົນໄກສຳລັບການປ້ອງກັນ, ຄວບ ຄຸມ ແລະ ຕິດຕາມກວດກາມົນລະພິດ (ດິນນ້ຳ, ອາກາດ ແລະ ສຽງ) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນໃນ ຂອບເຂດທົ່ວປະເທດ; (4) ຄຸ້ມຄອງຕິດຕາມກວດກາດ້ານສິ່ງແວດລ້ອມເຊັ່ນ: ສິ່ງເສດເຫຼືອ, ສານເຄມີທີ່ເປັນພິດ ອັນຕະລາຍ, ມົນລະພິດທາງອາກາດ, ມົນລະພິດທາງສຽງ ແລະ ການປ່ອຍນ້ຳເສຍຈາກຊຸມຊົນ ແລະ ໂຮງງານອຸດ

ສາທະກຳຕ່າງໆ; (5) ຂັນຂະຫຍາຍການຈັດຕັ້ງປະຕິບັດແນວຄວາມຄິດ 3Rs (ຫຼຸດຜ່ອນ, ນຳໃຊ້ຄືນ, ໝຸນໃຊ້ຄືນ) ໃນຄົວເຮືອນ ພ້ອມທັງປັບປຸງລະບົບການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອໃນເຂດຕົວເມືອງໃຫຍ່ ແລະ ເຂດຊົນນະບົດ; (6) ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີ ຂຽວ ແລະ ຍືນຍົງ ໂດຍສະເພາະກະສິກຳສະອາດ ແລະ ກະສິກຳປອດສານພິດ; (7) ຊຸກຍູ້ການທ່ອງ ທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາທຳມະຊາດ, ນຳໃຊ້ພະລັງງານແບບປະຍັດ, ເປັນມິດກັບສິ່ງແວດລ້ອມ ແລະ ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອື່ນໆ; (8) ດຳເນີນການຕິດຕາມກວດກາຄຸນນະພາບສິ່ງແວດລ້ອມ ໂດຍສະເພາະຄຸນນະພາບອາກາດ (PM 2,5) ແລະ ຊຸກຍູ້ດຳເນີນມາດຕະການຫຼຸດຜ່ອນ ແລະ ສະກັດກັ້ນໄຟປ່າໃນເຂດທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ; (9) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

4. ການສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນ ຈຳນວນ 1,6 ຕື້ ສຸມໃສ່ວຽກງານຄື:
   - ສ້າງນິຕິກຳ ແລະ ຄູ່ມືວິຊາການ ເພື່ອຈັດຕັ້ງປະຕິບັດກົດໝາຍທີ່ດິນ ແລະ ແຜນຈັດສັນແມ່ບົດທີ່ດິນ ພ້ອມທັງປະເມີນການຈັດຕັ້ງປະຕິບັດກົດໝາຍທີ່ດິນ;
   - ສົ່ງເສີມລະບົບການຄຸ້ມຄອງບໍລິຫານທີ່ດິນແບບທັນສະໄໝ;
   - ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມແບບຮອບດ້ານ;
   - ສຳຫຼວດ ແລະ ເກັບຂໍ້ມູນ ການນຳໃຊ້ທີ່ດິນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ພ້ອມທັງກຳນົດມາດຕະການໃນການແກ້ໄຂ;
   - ການປະເມີນລາຄາທີ່ດິນ, ການຂຶ້ນສຳມະໂນຄົວຕອນດິນ ແລະ ການອອກໃບຕາດິນ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ;
   - ການຕິດຕາມກວດກາ ແລະ ວັດແທກຄືນ ກ່ຽວກັບຂອບເຂດ ການເຊົ່າສຳປະທານດິນໃຫ້ມີປະສິດທິຜົນ ພ້ອມທັງບັນທຶກຂໍ້ມູນເຂົ້າໃນລະບົບແຜນທີ່;
   - ແລະ ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

5. ການສະໜອງທຶນໃນຮ່ວງທຶນຊັບພະຍາກອນນ້ຳ ຈຳນວນ 1,1 ຕື້ ຈະສຸມໃສ່ວຽກງານຄື:

   (1) ສ້າງ ປັບປຸງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ມີປະສິດທິຜົນ ແລະ ຮັດກຸມ; (2) ຄຸ້ມຄອງ ແລະ ຮັກສາແຫຼ່ງນ້ຳດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນ ລວມທັງປະຊາຊົນ; (3) ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຍອດນ້ຳ/ແຫຼ່ງນ້ຳ ທີ່ຕິດພັນກັບອ່າງຮັບນ້ຳ ໂດຍຈັດຕັ້ງຜັນຂະຫຍາຍຍຸດທະສາດນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ແຜນການຄຸ້ມຄອງອ່າງຮັບນ້ຳ; (4) ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນ້ຳທຳມະຊາດ (ຫ້ວຍ, ໜອງຄອງ, ບຶງ) ໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ; (5) ປົກປັກຮັກສາຄຸນນະພາບນ້ຳ ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ; (6) ຕິດຕາມກວດກາຄຸນນະພາບນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ພ້ອມທັງລາຍງານສະພາບຄຸນນະພາບນ້ຳ; (7) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

6. ການສະໜອງທຶນຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ ຈຳນວນ 1,2 ຕື້ ຈະສຸມໃສ່ວຽກງານຄື:
   - ຈັດຕັ້ງປະຕິບັດຄາດໝາຍການຫຼຸດຜ່ອນອາຍເຮືອນແກ້ວ (NDC) ແລະ ກົນໄກການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວເປັນຕົ້ນໂຄງການ REDD+ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວສາກົນ ສົ່ງເສີມທຸລະກິດທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ;

ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ-ເປັນມິດກັບສິ່ງແວດລ້ອມ;

- ເຊື່ອມສານການປັບຕົວກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາຂອງຂະແໜງ ການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຢ່າງເປັນລະບົບ; ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະ ການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ (ລະບົບເຕືອນໄພ, ປ້ອງ ກັນ, ການຊ່ວຍເຫຼືອສຸກເສີນ);
- ຈັດຕັ້ງປະຕິບັດແຜນງານຄົ້ນຄວ້າ ແລະ ເກັບກຳຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ທ້ອງ ຖິ່ນເພື່ອປະເມີນຄວາມສ່ຽງ, ສ້າງແຜນທີ່ຄວາມສ່ຽງໄພພິບັດ, ສ້າງແຜນດຳເນີນງານແກ້ໄຂບັນຫາຄວາມສ່ຽງ ແລະ ຄວາມ ບອບບາງ ເພື່ອໃຊ້ເຂົ້າໃນການວາງແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
- ສ້າງ ແລະ ຈັດຕັ້ງປະຕິບັດກົດຈະກຳປຸກຈິດສຳນຶກ ກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ການປັບ ຕົວກັບປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງ ແລະ ສະກັດກັ້ນໄພພິບັດທຳມະຊາດເພື່ອຮັບປະກັນການນຳໃຊ້ຊັບພະຍາກອນທ້ອງຖິ່ນຢ່າງມີປະສິດທິພາບ;
- ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດທີ່ມີປະສິດທິພາບ ແລະ ປະສິດທິຜົນ, ສ້າງຄວາມອາດສາມາດໃນການພະຍາກອນນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ, ສືບຕໍ່ປັບປຸງລະບົບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ໃນຂອບເຂດທົ່ວປະເທດ, ປັບປຸງ ແລະ ຂະ ຫຍາຍລະບົບເຕືອນໄພລ່ວງໜ້າໃຫ້ຫຼາຍຂຶ້ນ.

2) ການສະໜອງທຶນໃຫ້ໂຄງການໃໝ່

ການຈັດສັນທຶນ ສຳລັບແຕ່ລະຮ່ວງທຶນ ແມ່ນອີງໃສ່ການສະໜອງທຶນຂອງແຕ່ລະຮ່ວງທຶນ ທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ສອດຄ່ອງກັບ ກົດໝາຍ, ວິໄສທັດ, ຍຸດທະສາດ, ແຜນການ 5 ປີ ຂອງ ກປສ ແລະ ສອດຄ່ອງກັບສະພາບບັນຫາສິ່ງແວດລ້ອມຕົວຈິງທີ່ຕ້ອງການແກ້ໄຂ, ແນວທາງນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນຊຸມປີຕໍ່ໜ້າ.

ຕາຕະລາງ 3: ຄາດຄະເນການສະໜອງທຶນ ພາຍໃນ 2022-2025 ຕາມແຜນງົບປະມານແຫ່ງລັດ

ລາຍການ	ເປີເຊັນ	ປີ 2022 ຈຳນວນເງິນ (ກີບ)	ປີ 2023 ຈຳນວນເງິນ (ກີບ)	ປີ 2024 ຈຳນວນເງິນ (ກີບ)	ປີ 2025 ຈຳນວນເງິນ (ກີບ)
ຮ່ວງທຶນ ດ້ານນະໂຍບາຍ	30%	3,361,200,000	3,361,200,000	3,361,200,000	3,361,200,000
ຮ່ວງທຶນ ດ້ານຊີວະນາໆພັນ	15%	1,680,600,000	1,680,600,000	1,680,600,000	1,680,600,000
ຮ່ວງທຶນ ດ້ານສິ່ງແວດລ້ອມ	20%	2,240,800,000	2,240,800,000	2,240,800,000	2,240,800,000
ຮ່ວງທຶນ ດ້ານດິນ	15%	1,680,600,000	1,680,600,000	1,680,600,000	1,680,600,000
ຮ່ວງທຶນ ດ້ານນ້ຳ	10%	1,120,400,000	1,120,400,000	1,120,400,000	1,120,400,000
ຮ່ວງທຶນປ່ຽນແປງດິນຟ້າອາກາດ	10%	1,120,400,000	1,120,400,000	1,120,400,000	1,120,400,000
ລວມທັງໝົດ	**100%**	11,204,000,000	11,204,000,000	11,204,000,000	11,204,000,000